# ວັກຊິນ ອະຫິວາສັດປີກ

## ນິຍາມ:

ວັກຊິນຊະນິດນີ້ ປຸງແຕ່ງມາຈາກເຊື້ອ ພັນ PASTEURELLA MULTOCIDA AVIN ໃນພູມປູກນ້ຳຊີ້ນ ແລະ ຂ້າເຊື້ອດ້ວຍຟອກໂມນ, ເປັນວັກຊິນເຊື້ອຕາຍຊະນິດນ້ຳ ປະສົມກັບ ອາລຸຍມີນຽມ ໂປຕາສຊອນຊັນເຟດ. Aluminum Potassium Sulphate ເປັນສານເສີມພະລັງ.




## ລັກສະນະອາການ

ໄກ່ຕາຍກະທັນຫັນ ໂດຍບໍ່ມີປະກົດການຂອງພະຍາດ. ສັງເກດເບິ່ງໜ້າສີດຳຊ້ຳ ສະເພາະໂຕຕາຍແລ້ວ.

*ຂໍ້ທີ່ສັງເກດ:* ເມື່ອມີອະຫິວາເກີດຂື້ນ ຈະມີທັງໄກ່, ເປັດ, ໄກ່ງວງ , ຫ່ານ, ຕາຍພ້ອມໆກັນ. ເປີເຊັນການຕາຍ 30 ຫາ 50 % .

## ຂໍ້ແນະນຳ

ໃຊ້ປ້ອງກັນພະຍາດອະຫິວາສັດປີກ ແກ່ສັກປີກທົ່ວໄປ.

## ວິທີໃຊ້

ສັ່ນໃຫ້ລະລາຍດີກ່ອນໃຊ້



- ສັດປີກ ອາຍຸ 6 ອາທິດຂື້ນໄປສັກ 1 ມລ ຫຼືບໜັງ.
- ຫຼັງຈາກສັກຢາຈະມີອາການໃຄ່ເລັກນ້ອຍ. ຕາມບໍລິເວນສັກ ພາຍໃນລະຍະ 2—3 ມື້.



ຮູບ: ການສັກຫຼືບໜັງ



## ໄລຍະຄຸ້ມກັນ

ສັດຈະມີຄວາມຄຸ້ມກັນ ຫຼັງຈາກສັກຢາໄດ້ 2 ອາທິດ ແລະ ຈະຄຸ້ມກັນພະຍາດອະຫິວາສັດປີກໄດ້ 3 ເດືອນ.

## ການເກັບຮັກສາ

ຮັກສາໃນອຸນນະພູມ 4 ອົງສາ ກຸ້ມໄດ້ 1 ປີ. ເວລາຂົນຍ້າຍວັກຊີນ ຫຼີກເວັ້ນບໍ່ໃຫ້ຖືກແສງແດດ. ແລະ ອຸນນະພູມອົບເອົ້າເກີນໄປ.

## ແກ້ວບັນຈຸ

ແກ້ວໜຶ່ງບັນຈຸ 50 ມລ / 50 ເຂັມ.

| ຊະນິດຢາວັກຊິນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| ♦ ຢາວັກຊິນ ອະຫິວາສັດປີກ | ♦ ໃຊ້ກັບສັດປີກທົ່ວໄປ<br>♦ ສັດ ອາຍຸ 6 ອາທິດຂຶ້ນໄປ. | ♦ ສັກ 1 ມລ (ສັກຫຼືບໜັງ) | 3 ເດືອນ |

ຕາຕະລາງ : ການນຳໃຊ້ຢາວັກຊິນ ອະຫິວາສັກປີກ


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**



ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ


# ການນຳໃຊ້ຢາ

# ວັກຊິນອະຫິວາສັກປີກ




ຄັດຈາກ: ປຶ້ມຄູ່ມືການນຳໃຊ້ວັກຊິນສຳລັບສັດ (1997)


ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (*CETDU*)

ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (*LEAP*)